STAY SAFE MN



# ການຊີ້ແຈງຕໍ່ຂໍ້ຂ້ອງໃຈກ່ຽວກັບ ວັກຊີນໂຄວິດ-19

ຫຼາຍຄົນມີຄໍາຖາມ ແລະ ຂໍ້ສົງໃສກ່ຽວກັບວັກຊີນໂຄວິດ-19 ໃໝ່. ນີ້ແມ່ນປົກກະຕິ. ເອກະສານນີ້ຊ່ວຍໃຫ້ທ່ານຮູ້ຂໍ້ມູນກ່ຽວກັບວັກຊີນໂຄວິດ-19.

## ✔ ບໍ່ມີຂັ້ນຕອນຄວາມປອດໄພໃດທີ່ຖືກມອງຂ້າມໃນຂັ້ນຕອນການຜະລິດວັກຊີນໂຄວິດ-19.

ວັກຊີນໂຄວິດ-19 ໄດ້ຜ່ານຂັ້ນຕອນຄວາມປອດໄພ ແລະ ການສຶກສາຄືກັນກັບວັກຊີນຊະນິດອື່ນໆ. ນັກວິໄຈທາງການແພດໄດ້ທໍາການຜະລິດວັກຊີນຢ່າງໄວວາ ຍ້ອນໄດ້ມີການຄົ້ນຄວ້າກ່ອນໜ້າຫຼາຍປີ ແລະ ໄດ້ຮັບເງິນຊ່ວຍເຫຼືອຈາກລັດຖະບານກາງ.

## ✔ ວັກຊີນໂຄວິດ-19 ມີປະສິດທິພາບກັບທຸກຄົນໃນກຸ່ມອາຍຸທີ່ໄດ້ຮັບອະນຸມັດ.

ວັກຊີນໂຄວິດ-19 ທັງໝົດໄດ້ເຮັດການທົບລອງໃນດ້ານການສຶກສາທາງການແພດກັບຄົນຈໍານວນສິບພັນຄົນທີ່ມີອາຍຸ, ເຊື້ອຊາດ, ແລະ ຊົນເຜົ່າພື້ນເມືອງຕ່າງໆ ເພື່ອໃຫ້ແນ່ໃຈວ່າມີຄວາມປອດໄພ ແລະ ນໍາໃຊ້ໄດ້.

## ✔ ວັກຊີນໂຄວິດ-19 ບໍ່ສາມາດປ່ຽນແປງດີເອັນເອ (DNA) ຂອງທ່ານ.

mRNA (ຕົວນໍາສົ່ງ RNA) ໃນວັກຊີນໂຄວິດ-19 ຂອງ ໄຟເຊີ້ (Pfizer) ແລະ ໂມເດີນນາ (Moderna) ບໍ່ສາມາດປ່ຽນແປງ ຫຼື ແກ້ໄຂພັນທຸກໍາຂອງຄົນ (DNA), ຍ້ອນວ່າມັນຈະບໍ່ເຂົ້າໄປໃນຈຸດໃຈກາງຂອງຈຸລັງ, ຊຶ່ງເປັນບ່ອນທີ່ຜະລິດດີເອັນເອ. ພາຍຫຼັງທີ່ mRNA ເຮັດໜ້າທີ່ຂອງມັນ, ມັນຈະຖືກທໍາລາຍດ້ວຍຮ່າງກາຍ.

## ✔ ວັກຊີນໂຄວິດ-19 ຈອນສັນ ແອນ ຈອນສັນ (Johnson & Johnson) ບໍ່ມີເຍື້ອຫຸ້ມຂອງຕົວອ່ອນ

ວັກຊີນຊະນິດນີ້ຖືກຜະລິດຂຶ້ນຈາກໄວຣັສເຢັນທີ່ບໍ່ມີອັນຕະລາຍ, ທີ່ມີຊື່ວ່າອາດີໂນໄວຣັສ (adenovirus). ໄວຣັສເຢັນຊະນິດນີ້ ຂະຫຍາຍໂຕຢູ່ໃນຈຸລັງຕົວອ່ອນທີ່ໄດ້ເກັບໄວ້ມາດົນແລ້ວຊຶ່ງໄດ້ຖືກເກັບຮັກສາຈາກຜູ້ຜະລິດວັກຊີນ. ຫຼາຍກຸ່ມ ແລະ ສະຖາບັນຊີວະພາບທີ່ໜ້າເຊື່ອຖື ໄດ້ກ່າວວ່າ ຄົນອາດຈະໄດ້ຮັບວັກຊີນຊະນິດນີ້ດ້ວຍຈັນຍາບັນ ເມື່ອວັກຊີນຊະນິດອື່ນບໍ່ມີ.

## ✔ ວັກຊີນໂຄວິດ-19 ບໍ່ໄດ້ບັນຈຸເຄື່ອງຕິດຕາມ.

ວັກຊີນໂຄວິດ-19 ໃໝ່ບໍ່ໄດ້ບັນຈຸເຄື່ອງຕິດຕາມ ເພື່ອຕິດຕາມ ຫຼື ກວດສອບຄົນ.

## ✔ ວັກຊີນໂຄວິດ-19 ບໍ່ມີສານກັນບູດ, ໄຂ່, ຫຼື ຜະລິດຕະພັນຈາກຊີ້ນໝູ.

ວັກຊີນໂຄວິດ-19 ບໍ່ໄດ້ບັນຈຸ: ລາເຕັກສ໌ (ຢາງຂອງຕົ້ນໄມ້); ສານກັນບູດ; ຫຼື ຜະລິດຕະພັນຈາກສັດ, ລວມທັງຜະລິດຕະພັນຈາກຊີ້ນໝູ ຫຼື ເຈລາຕິນ. ວັກຊີນບໍ່ຂະຫຍາຍໂຕໃນໄຂ ແລະ ບໍ່ໄດ້ບັນຈຸຜະລິດຕະພັນຈາກໄຂ່.

## ✔ ຄົນຖືພາສາມາດສັກຢາວັກຊີນໄດ້.

ຂໍ້ມູນປັດຈຸບັນທີ່ພວກເຮົາມີສະແດງໃຫ້ເຫັນວ່າ ວັກຊີນໂຄວິດ-19 ບໍ່ໄດ້ສົ່ງຜົນກະທົບຕໍ່ລູກໃນທ້ອງ ຫຼື ເຮັດໃຫ້ແທ້ງລູກ. ພວກເຮົາຊຸກຍູ້ໃຫ້ທຸກຄົນທີ່ຖືພາໃຫ້ປຶກສາກັບທ່ານໝໍຂອງພວກເຂົາ ກ່ຽວກັບການສັກຢາວັກຊີນເພື່ອໃຫ້ເຂົ້າໃຈກ່ຽວກັບຜົນປະໂຫຍດ ແລະ ຄວາມສ່ຽງຂອງການສັກຢາວັກຊີນ.

## ✔ ວັກຊີນໂຄວິດ-19 ບໍ່ເຮັດໃຫ້ເປັນໝັນ.

ຖ້າທ່ານຕ້ອງການມີລູກໃນອະນາຄົດ, ທ່ານສາມາດຮັບວັກຊີນໂຄວິດ-19 ໄດ້. ບໍ່ມີຫຼັກຖານໃດທີ່ລະບຸວ່າມີຜົນຂ້າງຄຽງຕໍ່ບັນຫາ ການຈະເລີນພັນ.

## ✔ ສັກຢາວັກຊີນເຖິງວ່າທ່ານຈະເປັນໂຄວິດ-19 ແລ້ວກໍ່ຕາມ.

ພວກເຮົາບໍ່ຮູ້ວ່າດົນປານໃດທີ່ພູມຕ້ານທານຈາກໂຄວິດ-19 ຈະໝົດໄປ, ແລະ ພວກເຮົາບໍ່ຮູ້ວ່າພູມຕ້ານທານແຕກຕ່າງກັນອີງຕາມອາການໄຂ້ທີ່ທ່ານເປັນ. ພວກເຮົາຍັງບໍ່ສາມາດຮູ້ໄດ້ວ່າການປ່ຽນແປງອາດຈະມີຜົນກະທົບຕໍ່ຄົນທີ່ເປັນໂຄວິດ-19 ແນວໃດ.

## ✔ ທ່ານຈະບໍ່ຕິດໂຄວິດ-19 ຈາກການຮັບວັກຊີນ.

ບໍ່ມີໄວຣັສຂອງໂຄວິດ-19 ຊະນິດໃດຢູ່ໃນວັກຊີນ.

## ✔ ຜົນຂ້າງຄຽງຫຼັງຈາກທີ່ສັກຢາວັກຊີນແມ່ນມີໜ້ອຍ.

ຜົນຂ້າງຄຽງແມ່ນມີໜ້ອຍຖ້າທຽບກັບພະຍາດໂຄວິດ-19. ການເຈັບປວດ, ບວມ, ຫຼື ໃຄ່ ບໍລິເວນບ່ອນທີ່ສັກຢາ; ມີອາການເຈັບຫົວ; ຮູ້ສຶກປວດຂໍ້; ເມື່ອຍ; ແລະ ມີອາການໄຂ້ໜ້ອຍໜຶ່ງ ໝາຍເຖິງຮ່າງກາຍຂອງທ່ານແມ່ນກຳລັງຕອບສະໜອງຕໍ່ຢາວັກຊີນ. ບໍ່ເປັນຫຍັງຖ້າທ່ານບໍ່ຮູ້ສຶກວ່າມີຜົນຂ້າງຄຽງ. ແຕ່ລະຄົນມີອາການຕອບສະໜອງທີ່ບໍ່ຄືກັນຕໍ່ຢາວັກຊີນ.

## ✔ ວັກຊີນໂຄວິດ-19 ແມ່ນຟຣີ.

ບໍ່ວ່າທ່ານຈະມີບັນຫາກ່ຽວກັບປະກັນໄພ ຫຼື ສະຖານະພາບຂອງການເຂົ້າເມືອງຂອງທ່ານ, ທ່ານຈະບໍ່ຖືກຮຽກເກັບເງິນ.

## ✔ ວັກຊີນທີ່ດີທີ່ສຸດແມ່ນວັກຊີນທຳອິດ ທີ່ໄດ້ສະເໜີໃຫ້ກັບທ່ານ.

ວັກຊີນທີ່ດີທີ່ສຸດແມ່ນວັກຊີນທີ່ທ່ານໄດ້ຮັບໃນປັດຈະບັນນີ້. ວັກຊີນໃດກໍ່ຕາມທີ່ມີຢູ່, ແມ່ນເປັນທາງເລືອກທີ່ດີທີ່ສຸດ. ວັກຊີນໂຄວິດ-19 ທັງໝົດແມ່ນດີຫຼາຍໃນການປ້ອງກັນການເຈັບໄຂ້ຈາກໂຄວິດ-19, ໝາຍຄວາມວ່າຜູ້ໄດ້ຮັບວັກຊີນໂຄວິດ-19 ເກືອບຈະບໍ່ໄດ້ໄປໂຮງໝໍ, ແລະ ພວກເຂົາກໍ່ມີໂອກາດໜ້ອຍທີ່ຈະຕາຍຍ້ອນໂຄວິດ-19.

## ເພີ່ມເຕີມໃນການຮຽນຮູ້

ພວກເຮົາຍັງຄົງຕ້ອງຮຽນຮູ້ບາງສິ່ງບາງຢ່າງກ່ຽວກັບວັກຊີນໂຄວິດ-19, ເຊັ່ນວ່າວັກຊີນຈະປ້ອງກັນໄດ້ດົນປານໃດ, ແລະ ວັກຊີນຈະມີຜົນຕໍ່ການແຜ່ລະບາດຂອງໂຄວິດ-19 ແນວໃດ. ແຕ່ບໍ່ມີເຫດຜົນຫຍັງທີ່ຈະລັງເລຈາກການຮັກສາຊີວິດຂອງຕົວເອງຈາກການຮັບວັກຊີນ. ຜູ້ຊ່ຽວຊານຈະຍັງສືບຕໍ່ໃນການຕິດຕາມວັກຊີນ ເພື່ອຄວາມປອດໄພໃຫ້ດົນເທົ່າທີ່ຈະດົນໄດ້.

ຊອກຫາຂໍ້ມູນເພີ່ມເຕີມທີ່ກ່ຽວກັບວັກຊີນໂຄວິດ-19 (www.health.state.mn.us/diseases/coronavirus/vaccine/basics.html)

MINNESOTA

mn.gov/vaccine

Minnesota Department of Health | health.mn.gov | 651-201-5000 | 625 Robert Street North PO Box 64975, St. Paul, MN 55164-0975
ຕິດຕໍ່ health.communications@state.mn.us ເພື່ອຂໍຂໍ້ມູນໃນຮູບແບບອື່ນ. (Lao)

5/13/2021